ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ

ໜ່ວຍງານ ພັດທະນາຮູບແບບ ແລະຝຶກອົບຮົມ

# ຂໍ້ແນະນຳ

ກ່ຽວກັບ

## " ວິທີການສືບຕໍ່ຈັດຕັ້ງປະຕິບັດເພື່ອຮັບປະກັນການເຄື່ອນໄຫວຂອງ VES ຫຼັງຈາກສຳເລັດໂຄງການຮຽນຮູ້ ( ເຮັດ EVES ແລ້ວ ) "



ໜ່ວຍງານ ພັດທະນາຮູບແບບ ແລະຝຶກອົບຮົມ

ພະຈິກ, 2005

# ຂໍ້ແນະນຳ

ກ່ຽວກັບ

## "ວິທີການສືບຕໍ່ຈັດຕັ້ງປະຕິບັດເພື່ອຮັບປະກັນການເຄື່ອນໄຫວຂອງ *VES* ຫຼັງຈາກ ສຳເລັດໂຄງການຮຽນຮູ້ (ເຮັດ *EVES* ແລ້ວ)"

ດັ່ງທີ່ຮັບຮູ້ກັນແລ້ວວ່າ, ລະບົບ-ຮູບແບບການ ສົ່ງ ເສີມ ກ ປ ຂອງລາວ ( *L E A* ) ທີ່ພັດທະນາຂຶ້ນນັ້ນ ແມ່ນມີເປົ້າໝາຍເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ພື້ນຖານການຜະລິດໃນ ການພັດທະນາການຜະລິດ ກ ປ ຂອງຕົນ. ໝາຍວ່າບ້ານນຶ່ງໆ ຕ້ອງມີ ຊັບພະຍາກອນມະນຸດອັນເປັນ ກຳລັງ ການຜະລິດທີ່ມີຄວາມຮູ້, ຄວາມ ສາມາດໃນການຄຸ້ມຄອງ ແລະ ຖ່າຍທອດບົດຮຽນເອົາເອງພາຍໃນບ້ານ ຂອງຕົນ, ຈຶ່ງຈະຮັບປະ ກັນໄດ້ ຄວາມໝັ້ນຄົງຍາວນານ ແລະ ສະໜອງຕອບຕໍ່ການປ່ຽນແປງຕ່າງໆໄດ້ ຢ່າງ ທັນສະພາບ. ເປັນ ທີ່ຈະ ແຈ້ງແລ້ວວ່າໃນບ້ານນຶ່ງໆທີ່ມີການຈັດຕັ້ງຂະບວນການຮຽນຮູ້ ແມ່ນໄດ້ດຳເນີນ ການ ຢ່າງເປັນຂັ້ນ ຕອນ ໂດຍເລີ່ມຈາກການນຳສະເໜີ ຄວາມໝາຍ/ສຳຄັນຂອງ( *VES*), ຈຸດປະສົງຄາດໝາຍ ແລະ ບົດບາດ ໜ້າທີ່ ຂອງທຸກຝ່າຍທີ່ມີສ່ວນຮ່ວມໃນການຄຸ້ມຄອງ, ຕໍ່ດ້ວຍການສຶກສາຄວາມຕ້ອງການໃນການ ຝຶກ-ຊຸກຍູ້ສົ່ງເສີມ ຂອງ ກຸ່ມເປົ້າໝາຍ, ແລ້ວຈຶ່ງກ້າວເຂົ້າສູ່ການໄປຈັດຕັ້ງກຸ່ມເພື່ອດຳເນີນການ ຮຽນຮູ້ ແລະ ດຳເນີນການ ປະຕິບັດນຳໃຊ້ບົດຮຽນຈົນຄົບຮອບ ລະດູການຜະລິດ, ເມື່ອເຫັນວ່າ ມີຜົນການ ຮຽນຮູ້ທີ່ພົ້ນເດັ່ນ ຈຶ່ງໄດ້ ມີການຈັດການແລກປ່ຽນບົດຮຽນ ເພື່ອ ຊອກໃຫ້ເຫັນໄດ້ຜູ້ທີ່ ສົນໃຈ ຢາກດຳເນີນການຮຽນຮູ້ຕໍ່ ແລະ ຈຶ່ງໄດ້ມອບໂອນການຂະຫຍາຍບົດຮຽນທີ່ໄດ້ ຜ່ານຂະບວນການຮຽນຮູ້ນັ້ນ ໃຫ້ແກ່ອຳນາດການປົກຄອງ ບ້ານເປັນຜູ້ກະຕຸກຊຸກ-ຍູ້ຄຸ້ມຄອງ ເພື່ອໃຫ້ ວິຊາການບ້ານ ທີ່ສ້າງໄດ້ນັ້ນ ໄດ້ສືບຕໍ່ດຳເນີນການຖ່າຍທອດ ບົດ ຮຽນໃຫ້ແກ່ຄອບຄົວອື່ນໆທີ່ສົນໃຈ. ນັ້ນໝາຍວ່າ ລະບົບຕາໜ່າງ ການສົ່ງເສີມຂັ້ນບ້ານໄດ້ຮັບການສ້າງຕັ້ງຂຶ້ນ ໃນເບື້ອງຕົ້ນແລ້ວ. ແຕ່ການຈະມີຄວາມໝັ້ນຄົງ ຍືນນານຈາກຊ່ວງນີ້ຕໍ່ໄປ ແມ່ນຂຶ້ນກັບອຳນາດການປົກຄອງ ແລະ ວິຊາການບ້ານພ້ອມທັງຫົວໜ້າກຸ່ມຜະລິດ ເປັນຜູ້ຮັບຜິດຊອບ. ຢ່າງໃດກໍດີ, ໃນສະພາວະຄວາມເປັນຈິງ ແລ້ວບ້ານນຶ່ງໆ ທີ່ໄດ້ຜ່ານພຽງຮອບການຮຽນຮູ້ດຽວ ບວກທັງຍັງມີນັກສົ່ງເສີມຂັ້ນ ເມືອງ/ ແຂວງເປັນຜູ້ເອື້ອ ອຳນວຍການຮຽນຮູ້ນັ້ນແມ່ນຍັງມີຄວາມສ່ຽງຢູ່ວ່າ ຈະເດີນຕໍ່ໄປໄດ້,ຈຶ່ງມີຄວາມຈຳເປັນຕ້ອງສືບຕໍ່ການຊຸກຍູ້ ໃຫ້ລະບົບຂອງມັນເກີດມີການເຄື່ອນໄຫວໂດຍໂຕມັນເອງ . ຖ້າປຽບທຽບແລ້ວ ລະບົບຕາໜ່າງ ການສົ່ງເສີມ ຂັ້ນບ້ານ(*VES*)ໃນໄລຍະນີ້ ຍັງເໝືອນກັບໜ່ວຍໄຂ່ທີ່ກຽມເຂົ້າສູ່ ການເບາະ, ສ່ວນຫ້ອງການ ກ ປ ເມືອງ/ ນັກ ສົ່ງເສີມ ປຽບເໝືອນ ໂຕແມ່ໄກ່ . ຕາມທຳມະຊາດແລ້ວ ການເກີດ ເປັນໂຕໄກ່ນ້ອຍເບາະອອກໄດ້ ແມ່ນ ຂຶ້ນກັບ ຄວາມ ສົມດູນໃນການປະຕິສຳພັນລະວ່າງ 3 ສ່ວນຕົ້ນຕໍຄື: ***ໄຂ່ແດງ*** ປຽບເໝືອນ ຫົວໜ້າ/ກຸ່ມ ຜະລິດ, ***ໄຂ່ຂາວ*** ປຽບເໝືອນ ອຳນາດການປົກຄອງບ້ານ ແລະ ***ເມັດເຊື້ອໂຕອ່ອນ*** ປຽບເໝືອນວິຊາການບ້ານ, ຖ້າ ຫາກມີການ ປະຕິສຳພັນ ໃນໜ້າທີ່ດີກໍ່ສາມາດ ເບາະອອກດ້ວຍຕົວມັນເອງໄດ້ ແລະ ເປັນໄກ່ນ້ອຍທີ່ແຂງແຮງ ເຕີບໂຕໄວ

ແລະ ຖ້າກົງກັນຂ້າມ ກໍ່ຈະເນົາະອອກບໍ່ໄດ້ ຫຼື ໄດ້ກໍ່ອ່ອນແອເຕີບໂຕຍາກ ຫຼື ບໍ່ມີການເຕີບໂຕ ໄດ້ເລີຍ, ເຖິງແມ່ນ ວ່າໂຕແມ່ໄກ່ຈະຊ່ວຍຈິກ/ປອກປີ້ ໄຂ່ ເພື່ອໃຫ້ ໄກ່ນ້ອຍອອກມາໄດ້ກໍ່ຕາມ.

ດັ່ງນັ້ນຈື່ງມີຄວາມຈຳເປັນທີ່ ແຂວງ ແລະ ເມືອງຕ້ອງມີຄວາມເຂົ້າໃຈຂັ້ນຕອນວິທີການສືບຕໍ່ສະໜັບສະໜຸນ ການຂະຫຍາຍ (VES) ຕໍ່ໄປ (ອັນເປັນຮູບແບບການສົ່ງເສີມ ຮອບຊ່ວງທີ່ 2) ດັ່ງຈະໄດ້ແນະນຳຕໍ່ໄປນີ້:



1. ກ່ອນອື່ນໝົດຕ້ອງກຳແໜ້ນເປົ້າໝາຍຂອງການສົ່ງເສີມໃຫ້ຖືກຕ້ອງຈະໃຫ້ເກີດມີຫຍັງປ່ຽນແປງ
2. ກຳແໜ້ນຂະບວນການສ້າງຕາໜ່າງການສົ່ງເສີມຂັ້ນບານ (VES) ແລະ ຫຼັກການ ໃຫ້ຊັດເຈນ
3. ກຳໄດ້ສິ່ງທີ່ຕ້ອງໄດ້ສະໜັບສະໜຸນ ແລະ ການເຊື່ອມໂຍງ ລະວ່າງພາກລັດ ແລະ ພາກປະຊາຊົນ (ສູນກາງ, ແຂວງ, ເມືອງ - ບ້ານ, ກຸ່ມ, ຄອບຄົວຜູ້ຜະລິດຫຼືວິຊາການບ້ານ) ມີສາຍການຄຸ້ມຄອງແນວໃດ?
4. ກຳໄດ້ວ່າຜູ້ມີສ່ວນກ່ຽວຂ້ອງທີ່ສຳຄັນໃນວຽກງານການຊຸກຍູ້ ແລະ ຄຸ້ມຄອງ (VES) ມີບົດບາດໜ້າທີ່ ໃນແຕ່ລະໄລຍະຂອງການດຳເນີນຂະບວນການອັນໃດ? ແລະ ວິທີເຮັດຢ່າງໃດ?
5. ຮູ້ໄດ້ວິທີດຳເນີນການ ແລະ ການນຳໄຊ້ບັນດາເຄື່ອງມືການສົ່ງເສີມແຕ່ລະໄລຍະຢ່າງໜັກແໜ້ນ

ດ້ວຍປະການດັ່ງກ່າວຈື່ງມີຂໍ້ແນະນຳໃຫ້ແຂວງ,ເມືອງເພື່ອນຳເອົາເນື້ອໃນຈິດໃຈໄປຜັນຂະຫຍາຍລົງສູ່ກຸ່ມຜະລິດ, ວິຊາການບ້ານ ແລະ ອຳນາດການປົກຄອງບ້ານໃຫ້ໄດ້ມີການສືບຕໍ່ເຄື່ອນໄຫວຂະຫຍາຍຕາໜ່າງການສົ່ງເສີມຂອງຮາກຖານການຜະລິດຕົນໃຫ້ມີການພັດທະນາຂື້ນເປັນກ້າວໆຫຼັງຈາກການເຮັດ (EVES) ແລ້ວ.

ລາຍລະອຽດຂອງໜ້າວຽກສຳຄັນທີ່ແຕ່ລະລະດັບຕ້ອງສືບຕໍ່ປະຕິບັດຫຼັງຈາກໄດ້ເຮັດ EVES ມີຄື:

## ກ. ໜ້າວຽກຂອງວິຊາການບ້ານ VEW ຫຼັງຈາກໄດ້ເຮັດ( EVES) ແລ້ວ

1. ຈັດຕັ້ງການຖ່າຍທອດບົດຮຽນໃຫ້ກຸ່ມໃໝ່(ຮວມມີການວາງແຜນ-ການສ້າງຫຼັກສູດ ແລະ ດຳເນີນຂະບວນ ການຮຽນຮູ້ໃຫ້ຄົບວົງຈອນ)
2. ຕິດຕາມສາມະຊິກກຸ່ມເກົ່າ(ເກັບກຳບັນຫາ/ຄວາມຕ້ອງການ,ສະຖິຕິການຜະລິດຂອງກຸ່ມ)
3. ຈັດຕັ້ງການແລກປ່ຽນລະວ່າງ ກຸ່ມເກົ່າ ແລະ ໃໝ່

4. ຮ່ວມ *Network* (ປະສານສົມທົບ,ເຂົ້າຮ່ວມການປະຊຸມ,ຝຶກຢູ່ ເມືອງ/ບ່ອນອື່ນໆ)
5. ເປັນເສນາທິການໃຫ້ອຳນາດການປົກຄອງບ້ານໃນການຈັດຕັ້ງກອງປະຊຸມຕີລາຄາປະເມີນຜົນປະຈຳລະດູການຜະລິດ ແລະ ປະຈຳປີ:
   (ຊອກໃຫ້ເຫັນໄດ້ອັນເດັ່ນ,ອ່ອນ,ສິ່ງໃໝ່ທີ່ຕ້ອງການ ແລະ ມີແຜນຕໍ່ໜ້າ)

ຂ. ໜ້າວຽກຂອງທີມງານເມືອງ

1. ວາງແຜນການສົ່ງເສີມໄປຕາມທ່າແຮງແລະຄວາມຕ້ອງການຂອງຊາວບ້ານ(ໄປຕາມກຸ່ມບ້ານ)
2. ເຂົ້າຮ່ວມໃຫ້ຄຳແນະນຳການວາງແຜນສົ່ງເສີມຕໍ່ເພື່ອຜັນຂະຫຍາຍຍຸດທະສາດການພັດທະນາເສດຖະກິດກະສິກຳຂອງກຸ່ມບ້ານເປົ້າໝາຍນັ້ນໆ
3. ເຂົ້າຮ່ວມ***(ຫຼືອາດເປັນຜູ້ເອື້ອອຳນວຍ)*** ການແລກປ່ຽນບົດຮຽນລະຫວ່າງວິ ຊາການບ້ານ ພ້ອມທັງແນະນຳແບບຟອມ ແລະ ການ ນຳໃຊ້ຕ່າງໆ ຖ້າເຫັນວ່າມີຄວາມຈຳເປັນ
4. ລົງຕິດຕາມການເຄື່ອນໄຫວ (**VES**) ໃນແຕ່ລະບ້ານພ້ອມທັງສັງເກດການ ຝຶກອົບຮົມຂອງກຸ່ມຮຽນຮູ້ໃໝ່ທີ່ວິຊາການບ້ານຂະຫຍາຍນັ້ນ(ອາດໃນບາງ ເລື້ອງຫຼືບາງຄັ້ງ ຕາມການສະເໜີ)
5. ເຂົ້າຮ່ວມໃນການຈັດຕັ້ງ ແລະ ເອື້ອອຳນວຍ ກອງປະຊຸມຕີລາຄາ ປະເມີນ ຜົນການຮຽນຮູ້ ໃນຮອບລະດູການ ຫຼືຮອບ ປີ
6. ຈັດຕັ້ງການຢ້ຽມຢາມ ແລະ ແລກປ່ຽນບົດຮຽນໃຫ້ກຸ່ມຜະລິດ ທີ່ເຫັນ ວ່າ ຈຳເປັນ
7. ກະກຽມບັນດາຂໍ້ມູນເພື່ອເອື້ອອຳນວນໃຫ້ແກ່ການຈັດຕັ້ງກອງປະຊຸມປະ ເມີນຜົນການປະຕິບັດສ້າງ *VES* ໃນຮອບປີ ຂອງເມືອງ
8. ຂະຫຍາຍ **VES** ສູ່ກຸ່ມບ້ານໃໝ່
9. ສ້າງຖານຂໍ້ມູນ ຜົນການຕິດຕາມວຽກສົ່ງເສີມຂອງເມືອງ
10. ເຂົ້າຮ່ວມຍົກລະດັບຄວາມຮູ້,ຄວາມສຳນານດ້ານວິຊາດານຕ່າງໆ ເພື່ອຮັບໄຊ້ ການສົ່ງເສີມ...

ຄ. ໜ້າວຽກຂອງທີມງານແຂວງ

1. ຮ່ວມວິເຄາະຕີລາຄາແຜນສົ່ງເສີມຂອງເມືອງ
2. ຮ່ວມກອງປະຊຸມ ການນຳສະເໜີ **VES** ສູ່ບ້ານໃໝ່ ຂອງທີມເມືອງໂດຍສະເພາະຄັ້ງທຳອິດ
3. ຈັດການແລກປ່ຽນບົດຮຽນລະຫວ່າງເມືອງເກົ່າ ແລະ ເມືອງໃໝ່
4. ປະເມີນຜົນການຈັດຕັ້ງ **VES** ຂອງທຸກໆເມືອງ
5. ຂະຫຍາຍ **VES** ສູ່ເມືອງໃໝ່

6. ລົງຕິດຕາມການກະຈ່າຍ **VES** ຂອງທີມງານເມືອງໄປສູ່ບ້ານໃໝ່
7. ສ້າງຖານຂໍ້ມູນການຕິດຕາມວຽກສົ່ງເສີມຂອງແຂວງ ແລະ ສືບຕໍ່ ພັດທະນາ ສື່, ເອກະສານສົ່ງເສີມ
8. ກະກຽມບັນດາຂໍ້ມູນຕ່າງໆເພື່ອສະໜັບໜູນກອງປະຊຸມສົ່ງເສີມຂອງແຂວງ**(Dist. Conference)**
9. ຈັດຕັ້ງການຝຶກທົບທວນຄືນ/ຍົກລະດັບທີມພະນັກງານເມືອງບົນພື້ນຖານ,ບັນຫາ/ຄວາມຕ້ອງການແຕ່ລະໄລຍະ
10. ເຂົ້າຮ່ວມການຝຶກ, ຍົກລະດັບ ດ້ານວິຊາການຕ່າງໆເພື່ອຮັບໃຊ້ການສົ່ງເສີມ

໑. ໜ້າວຽກຂອງທີມ ສູນກາງຫຼັງການມອບ *EVES*

1. ຂະຫຍາຍ **VES** ສູ່ແຂວງ,ເມືອງເປົ້າໝາຍໃໝ່
2. ຕິດຕາມການຂະຫຍາຍ **VES** ຂອງແຂວງ ລົງສູ່ເມືອງ
3. ຈັດກອງປະຊຸມປະເມີນຜົນ ການຈັດຕັ້ງປະຕິບັດ **VES** ຂອງບັນດາ ແຂວງຕ່າງໆ
4. ຈັດຕັ້ງການແລກປ່ຽນບົດຮຽນລະຫວ່າງແຂວງເກົ່າແລະ ແຂວງໃໝ່
5. ເຂົ້າຮ່ວມກອງປະຊຸ່ມຕີລາຄາປະເມີນຜົນການສົ່ງເສີມຂອງແຂວງ
   **(Provincial Extension Conference)**
6. ພັດທະນາຮູບແບບ - ເຄື່ອງມືການສົ່ງເສີມໃຫ້ສອດຄ່ອງກັບສະພາບເປັນກ້າວໆ
7. ພັດທະນາລະບົບຂໍ້ມູນການຕິດຕາມວຽກສົ່ງເສີມທຸກລະດັບ ຮ່ວມທັງຖານຂໍ້ມູນ ໃນ ສ່ວນສູນກາງ
8. ຈັດຝຶກທົບທວນຄືນ/ຍົກລະດັບຂີດຄວາມສາມາດຂອງນັກສົ່ງເສີມແຂວງ ແລະ ເມືອງ ໃນບາງເລື່ອງທີ່ແຂວງບໍ່ສາມາດເຮັດໄດ້
9. ກະກຽມບັນດາຂໍ້ມູນຕ່າງໆເພື່ອເອື້ອອຳນວຍໃຫ້ແກ່ການຈັດກອງປະຊຸມສົ່ງເສີມແຫ່ງຊາດ
   *(National Extension conference)*
10. ເຂົ້າຮ່ວມການຍົກລະດັບ,ການປະຊຸມ,ທັດສະນະສຶກສາຕ່າງໆ.. ຮ່ວມທັງການປະສານສົມທົບ ກັບອົງການຈັດຕັ້ງອື່ນໆ...

ບັນດາໜ້າວຽກຫຼືກິດຈະກຳສຳຄັນທີ່ໄດ້ກຳນົດຂ້າງເທິງນີ້ມີຄວາມຈຳເປັນທີ່ທີມງານສົ່ງເສີມໃນແຕ່ລະລະດັບຕ້ອງໄດ້ຈັດລຽງເຂົ້າເປັນແຜນປະຕິບັດການໃນຮອບນຶ່ງປີ(ລະດູການຜະລິດເພື່ອຮັບປະກັນໃຫ້ການຈັດຕັ້ງຜັນຂະຫຍາຍຮູບແບບການສົ່ງເສີມຂອງຕົນໃຫ້ມີຄວາມຄ່ອງຕົວ, ລ່ອງຊ່ອງກັນໃນທຸກລະດັບຂັ້ນຄຸ້ມຄອງ, ຕິດຕາມຊຸກຍູ້ຊື່ງກັນແລະກັນໄດ້ຢ່າງເປັນລະບົບຕໍ່ເນື່ອງ ແລະ ທັນສະພາບຄວາມຕ້ອງການ, ຮວມທັງມີຖານຂໍ້ມູນສົ່ງເສີມຢ່າງມີລະບົບ ແລະ ກະທັດລັດອີກດ້ວຍ.

## ຮ່າງແບບຟອມຕົວຢ່າງ “ແຜນການປະຕິບັດກິດຈະກຳ ” ຫຼັງການເຮັດ EVES

| ຊື່ກິດຈະກຳ: | ໄລຍະເວລາດຳເນີນ: (ເດືອນ) | ງົບປະມານ | ເອະສານ,ຂໍ້ມູນ | ອຸປະກອນ |
|---|---|---|---|---|
| | 1.2.3.4.5.6.7.8.9.10.11.12 | | | |
| | | | | |
| | | | | |